ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ
ຄະນະປະຈໍາ

ເລກທີ 291 /ຄປຈ
ນະຄອນຫຼວງວຽງຈັນ, ວັນທີ 08 / 12 / 22

# ມະຕິ
# ຂອງຄະນະປະຈໍາສະພາແຫ່ງຊາດ
# ວ່າດ້ວຍ ການຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກໍານົດໃຫ້ອອກເປັນນິຕິກໍາໃຕ້ກົດໝາຍ

- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງ ກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍ ວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 33 ຂໍ້ 3.1;
- ອີງຕາມກົດໝາຍວ່າດ້ວຍການຕິດຕາມກວດກາຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 12/ສພຊ, ລົງວັນທີ 15 ພະຈິກ 2016 ມາດຕາ 7 ຂໍ້ 2.

ເພື່ອຮັບປະກັນໃຫ້ວຽກງານຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກໍານົດໃຫ້ອອກ ເປັນນິຕິກໍາໃຕ້ກົດໝາຍ ມີຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດ.

**ຄະນະປະຈໍາສະພາແຫ່ງຊາດ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ມະຕິສະບັບນີ້ ກໍານົດ ຫຼັກການ, ລະບຽບການ ແລະ ຂັ້ນຕອນ ກ່ຽວກັບວຽກງານຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກໍານົດໃຫ້ອອກເປັນນິຕິກໍາໃຕ້ກົດໝາຍ ຂອງອົງການລັດ ເພື່ອເຮັດ ໃຫ້ວຽກງານດັ່ງກ່າວ ດໍາເນີນຢ່າງເປັນລະບົບຕໍ່ເນື່ອງ, ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ເຮັດໃຫ້ກົດ ໝາຍທີ່ປະກາດໃຊ້ແລ້ວ ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງຖືກຕ້ອງ ແລະ ເຂັ້ມງວດ.

ມາດຕາ 2 ການຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ

ການຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ ແມ່ນ ການຕິດຕາມກວດກາ, ຊຸກຍູ້ ວຽກງານອອກນິຕິກຳໃຕ້ກົດໝາຍ ຂອງອົງການລັດ ທີ່ມາດຕາຂອງກົດໝາຍ ໄດ້ກຳນົດໃຫ້ມີ ລະບຽບການຕ່າງຫາກ ຫຼື ລະບຽບການສະເພາະ.

ມາດຕາ 3 ຫຼັກການຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ

ໃນການເຄື່ອນໄຫວວຽກງານຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ;
2. ຮັບປະກັນຄວາມ ໂປ່ງໃສ, ຍຸຕິທຳ, ເປີດເຜີຍ;
3. ປະສານສົມທົບກັບອົງການລັດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;
4. ມີຄວາມຊັດເຈນ ແລະ ທັນເວລາ.

## ໝວດທີ 2

## ຄວາມຮັບຜິດຊອບໃນການຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ

ມາດຕາ 4 **ຄວາມຮັບຜິດຊອບໃນການຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ**

ຄະນະປະຈຳສະພາແຫ່ງຊາດ ຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ ໂດຍມອບໃຫ້ກຳມາທິການກົດໝາຍ ເປັນໃຈກາງປະສານສົມທົບກັບກຳມາທິການອື່ນຂອງສະພາແຫ່ງຊາດ.

ມາດຕາ 5 **ຄວາມຮັບຜິດຊອບຂອງກຳມາທິການກົດໝາຍ**

ໃນການຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ ກຳມາທິການກົດໝາຍ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຄົ້ນຄວ້າ, ສ້າງແຜນການຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ ປະຈຳປີ ຫຼື ເປັນແຕ່ລະໄລຍະ ຂອງຄະນະປະຈຳສະພາແຫ່ງຊາດ ໂດຍປະສານສົມທົບກັບກຳມາທິການທີ່ກ່ຽວຂ້ອງ ເພື່ອສະເໜີຄະນະປະຈຳສະພາແຫ່ງຊາດ ພິຈາລະນາ;
2. ຜັນຂະຫຍາຍແຜນການຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ ຂອງຄະນະປະຈຳສະພາແຫ່ງຊາດ ເປັນແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳລະອຽດຂອງຕົນ;
3. ເປັນໃຈກາງປະສານສົມທົບກັບ ກຳມາທິການອື່ນຂອງສະພາແຫ່ງຊາດ ກ່ຽວກັບວຽກງານຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ;
4. ພົວພັນ, ປະສານສົມທົບກັບອົງການລັດທີ່ກ່ຽວຂ້ອງ ກ່ຽວກັບວຽກງານຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ;

5. ເປັນເຈົ້າການຕິດຕາມກວດກາ, ຊຸກຍູ້ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ ຂອງອົງການລັດ ໃນຂົງເຂດທີ່ຕົນຮັບຜິດຊອບ;

6. ສະຫຼຸບ, ສັງລວມ ວຽກງານຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ ເພື່ອລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ;

7. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 6 ຄວາມຮັບຜິດຊອບຂອງກຳມາທິການອື່ນຂອງສະພາແຫ່ງຊາດ**

ໃນການຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ ກຳມາທິການອື່ນຂອງສະພາແຫ່ງຊາດ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຄົ້ນຄວ້າ, ປະກອບຄຳເຫັນໃສ່ແຜນການຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ ປະຈຳປີ ຫຼື ເປັນແຕ່ລະໄລຍະ ຂອງຄະນະປະຈຳສະພາແຫ່ງຊາດ;

2. ຜັນຂະຫຍາຍແຜນການຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ ຂອງຄະນະປະຈຳສະພາແຫ່ງຊາດ ເປັນແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳລະອຽດຂອງຕົນ;

3. ພົວພັນ, ປະສານສົມທົບກັບອົງການລັດທີ່ກ່ຽວຂ້ອງ ກ່ຽວກັບວຽກງານຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ;

4. ເປັນເຈົ້າການຕິດຕາມກວດກາ, ຊຸກຍູ້ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ ໃນຂົງເຂດທີ່ຕົນຮັບຜິດຊອບ;

5. ສະຫຼຸບ, ສັງລວມ ວຽກງານຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ ໃນຂົງເຂດທີ່ຕົນຮັບຜິດຊອບ ໂດຍສົມທົບກັບກຳມາທິການກົດໝາຍ;

6. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 3
## ຂັ້ນຕອນ ແລະ ຜົນການຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ

**ມາດຕາ 7 ຂັ້ນຕອນຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ**

ການຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ສ້າງແຜນການຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ;

2. ດຳເນີນການຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ;

3. ລາຍງານຜົນການກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ.

ມາດຕາ 8 ການສ້າງແຜນການຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກໍານົດໃຫ້ອອກເປັນນິຕິກໍາໃຕ້ກົດໝາຍ

ກໍາມາທິການກົດໝາຍ ຄົ້ນຄວ້າ, ສ້າງແຜນການຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກໍານົດໃຫ້ອອກເປັນນິຕິກໍາໃຕ້ກົດໝາຍ ປະຈໍາປີ ຫຼື ເປັນແຕ່ລະໄລຍະ ໂດຍສົມທົບກັບກໍາມາທິການອື່ນຂອງສະພາແຫ່ງຊາດ ແລ້ວສະເໜີຄະນະປະຈໍາສະພາແຫ່ງຊາດ ພິຈາລະນາ.

**ມາດຕາ 9 ການດໍາເນີນການຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກໍານົດໃຫ້ອອກເປັນນິຕິກໍາໃຕ້ກົດໝາຍ**

ການຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກໍານົດໃຫ້ອອກເປັນນິຕິກໍາໃຕ້ກົດໝາຍ ໃຫ້ດໍາເນີນ ດັ່ງນີ້:

1. ສົ່ງແຈ້ງການ ໃຫ້ອົງການລັດທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ, ກະກຽມ;
2. ພົວພັນ, ປະສານສົມທົບກັບອົງການລັດທີ່ກ່ຽວຂ້ອງ ກ່ຽວກັບວຽກງານຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກໍານົດໃຫ້ອອກເປັນນິຕິກໍາໃຕ້ກົດໝາຍ;
3. ຕິດຕາມກວດກາ, ຊຸກຍູ້ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກໍານົດໃຫ້ອອກເປັນນິຕິກໍາໃຕ້ກົດໝາຍ ໂດຍຈັດກອງປະຊຸມຮ່ວມກັບອົງການລັດທີ່ກ່ຽວຂ້ອງ.

**ມາດຕາ 10 ການລາຍງານຜົນການຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກໍານົດໃຫ້ອອກເປັນນິຕິກໍາໃຕ້ກົດໝາຍ ໃນກອງປະຊຸມຄະນະປະຈໍາສະພາແຫ່ງຊາດ**

ການລາຍງານ ແລະ ພິຈາລະນາຜົນການຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກໍານົດໃຫ້ອອກເປັນນິຕິກໍາໃຕ້ກົດໝາຍ ໃນກອງປະຊຸມຄະນະປະຈໍາສະພາແຫ່ງຊາດ ໃຫ້ປະຕິບັດ ດັ່ງນີ້:

1. ປະທານກໍາມາທິການກົດໝາຍ ລາຍງານຜົນການຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກໍານົດໃຫ້ອອກເປັນນິຕິກໍາໃຕ້ກົດໝາຍ;
2. ກອງປະຊຸມ ປະກອບຄໍາເຫັນ ຫຼື ຕັ້ງຄໍາຖາມໃສ່ບົດລາຍງານຜົນການຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກໍານົດໃຫ້ອອກເປັນນິຕິກໍາໃຕ້ກົດໝາຍ;
3. ປະທານກໍາມາທິການ ຫຼື ອົງການລັດທີ່ອອກນິຕິກໍາໃຕ້ກົດໝາຍ ຊີ້ແຈງ ຫຼື ແກ້ຂໍ້ຂ້ອງໃຈ ແລະ ຕອບຄໍາຖາມທີ່ໄດ້ຍົກຂຶ້ນ;
4. ປະທານກອງປະຊຸມ ມີຄໍາເຫັນສະຫຼຸບ ແລະ ສະເໜີໃຫ້ກອງປະຊຸມ ພິຈາລະນາ, ຮັບຮອງເອົາ.

**ມາດຕາ 11 ການລາຍງານຜົນການຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກໍານົດໃຫ້ອອກເປັນນິຕິກໍາໃຕ້ກົດໝາຍ ໃນກອງປະຊຸມສະພາແຫ່ງຊາດ**

ການລາຍງານ ແລະ ພິຈາລະນາຜົນການຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກໍານົດໃຫ້ອອກເປັນນິຕິກໍາໃຕ້ກົດໝາຍ ໃນກອງປະຊຸມສະພາແຫ່ງຊາດ ໃຫ້ປະຕິບັດ ດັ່ງນີ້:

1. ຄະນະປະຈໍາສະພາແຫ່ງຊາດ ລາຍງານ;
2. ອົງການລັດທີ່ອອກນິຕິກໍາໃຕ້ກົດໝາຍ ຊີ້ແຈງ;
3. ປະທານກອງປະຊຸມ ມີຄໍາເຫັນເຈາະຈີ້ມ;
4. ສະມາຊິກສະພາແຫ່ງຊາດ ປະກອບຄໍາເຫັນ ຫຼື ຕັ້ງຄໍາຖາມ;
5. ກອງປະຊຸມ ລົງຄະແນນສຽງຮັບຮອງເອົາບົດລາຍງານ.

ມາດຕາ 12 ຜົນການຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກໍານົດໃຫ້ອອກເປັນນິຕິກໍາໃຕ້ກົດໝາຍ

ພາຍຫຼັງກອງປະຊຸມສະພາແຫ່ງຊາດ ພິຈາລະນາ, ຮັບຮອງເອົາ ຜົນການຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກໍານົດໃຫ້ອອກເປັນນິຕິກໍາໃຕ້ກົດໝາຍ ໃຫ້ອົງການລັດທີ່ກ່ຽວຂ້ອງ ນໍາໄປປັບປຸງ, ແກ້ໄຂ ຕາມມະຕິກອງປະຊຸມສະພາແຫ່ງຊາດ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

ມາດຕາ 13 ການຈັດຕັ້ງປະຕິບັດ

ກໍາມາທິການຂອງສະພາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 14 ຜົນສັກສິດ

ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ຄະນະປະຈໍາສະພາແຫ່ງຊາດ

ປະທານ

ປອ ໄຊສົມພອນ ພົມວິຫານ